ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 771 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 16 NOV 2015

# ແຈ້ງການ
## ກ່ຽວກັບການຈຳໜ່າຍຫຼຽນທີ່ລະນຶກ
## ວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ

- ອີງຕາມ ແຈ້ງການຫ້ອງວ່າການລັດຖະບານ, ສະບັບເລກທີ 1671/ຫລບ.ກລຂ, ລົງວັນທີ 08/10/2015.

ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສາກົນ ທັງພາຍໃນ-ຕ່າງປະເທດ ແລະ ມວນຊົນທົ່ວໄປຊາບວ່າ: ເນື່ອງໃນໂອກາດສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ ໃຫ້ ມີຄວາມໝາຍ ຄວາມສຳຄັນເລິກເຊິ່ງທາງດ້ານປະຫວັດສາດຂອງຊາດ, ລັດຖະບານ ສປປ ລາວ ໄດ້ອະນຸມັດໃຫ້ ທະນາຄານ ແຫ່ງ ສປປ ລາວ ຜະລິດ ແລະ ຈຳໜ່າຍຫຼຽນທີ່ລະນຶກ ວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ ຊຶ່ງມີປະເພດຫຼຽນເງິນ ແລະ ຫຼຽນຄຳ ດັ່ງລາຍລະອຽດລຸ່ມນີ້:

1. <u>ຄຸນລັກສະນະຂອງຫຼຽນ:</u>
   - **ດ້ານໜ້າ:** ມີຮູບທຸງຊາດລາວ.
   - **ດ້ານຫຼັງ:** ມີຮູບເຄື່ອງໝາຍຊາດຂອງ ສປປ ລາວ.

2. <u>ລັກສະນະທາງດ້ານເຕັກນິກ:</u>

➢ **ປະເພດຫຼຽນເງິນ:**

- ເຮັດດ້ວຍເງິນສິດ 925, ມູນຄ່າໃນໜ້ານາມ 40 000 ກີບ, ຂະໜາດ 39 ມິລີແມັດ, ນ້ຳໜັກ 01 ອອນ;

**ດ້ານໜ້າ**




**ດ້ານຫຼັງ**




ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

➢ **ປະເພດຫຼຽນຄຳ:**

- ເຮັດດ້ວຍຄຳ (999,9), ມູນຄ່າໃນໜ້ານາມ 40 000 ກີບ, ຂະໜາດ 30 ມີລີແມັດ, ນ້ຳໜັກ ½ ອອນ.

| **ດ້ານໜ້າ** | **ດ້ານຫຼັງ** |
|---|---|
|  |  |





ຖ້າທ່ານໃດມີຄວາມຕ້ອງການ ຫຼື ສົນໃຈຫຼຽນທີ່ລະນຶກດັ່ງກ່າວ ສາມາດເບິ່ງຂໍ້ມູນໄດ້ທີ່ເວັບໄຊ້: **www.bol.gov.la** ຫຼື ສອບຖາມລາຍລະອຽດທີ່:

- **ກົມເງິນຕາ ທະນາຄານແຫ່ງ ສປປ ລາວ** **ເບີໂທລະສັບ: 021 213 119;**
- **ສາຂາຫຼວງພະບາງ** **ເບີໂທລະສັບ: 071 260 706;**
- **ສາຂາອຸດົມໄຊ** **ເບີໂທລະສັບ: 081 312 144;**
- **ສາຂາສະຫວັນນະເຂດ** **ເບີໂທລະສັບ: 041 252 431;**
- **ສາຂາ ຈຳປາສັກ** **ເບີໂທລະສັບ: 031 254 026.**

ຈະເລີ່ມຈຳໜ່າຍ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

**ຫ້ອງການທະນາຄານແຫ່ງ ສປປ ລາວ**

ພາສີ ພົມມະກອນ